# ການຕິດຕາມການວາງແຜນນຳໃຊ້ທີ່ດິນ ແບບມີສ່ວນຮ່ວມເພື່ອໃຫ້ເກີດຜົນດີໃນການຈັດການພູມີທັດ ແລະ ຊີວິດການເປັນຢູ່ຂອງຊາວກະສິກອນໃນທ້ອງຖິ່ນ

ກໍລະນີສຶກສາ: ບ້ານນ້ຳບໍ່, ບ້ານສິບເຈ້ຍ ແລະ ບ້ານຜັກຫົກ ເມືອງໂພນໄຊ ແຂວງ ຫຼວງພະບາງ

*ບຸນຖະໜອມ ບົວທອມ[1,2], Jeremy Bourgoin[2,3], Guillaume Lestrelin[2,4], Jean-Christophe Castella[2,4]*

## ບົດຄັດຫຍໍ້

ນັບຕັ້ງແຕ່ຊຸມປີ 1990, ວຽກງານການວາງແຜນນຳໃຊ້ທີ່ດິນ ແລະ ມອບດິນມອບປ່າໄດ້ເລີ່ມຈັດຕັ້ງປະຕິບັດພາຍໃນທົ່ວປະເທດ ເພື່ອເປັນການເພີ່ມສິດໃນການຖືຄອງທີ່ດິນ, ຢຸດຕິການຖາງປ່າເຮັດໄຮ່, ເພີ່ມເນື້ອທີ່ປົກຄຸມປ່າໄມ ແລະ ຫຼຸດຜ່ອນຜົນກະທົບທາງລົບຈາກການຕັດໄມ້ທຳລາຍປ່າ, ໂດຍໄດ້ຈັດສັນພື້ນທີ່ປ່າໄມ້ ຫຼື ພື້ນທີ່ທຳການຜະລິດ. ຫຼັງຈາກນັ້ນກໍ່ໄດ້ອອກໃບນຳໃຊ້ທີ່ດິນຊົ່ວຄາວໃຫ້ແຕ່ລະຄອບຄົວຖືຄອງ. ເຖິງຢ່າງໃດກໍ່ຕາມ, ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ແມ່ນຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ ແລະ ຄ່ອຍໆຢຸດເຊົາກິດຈະກຳ ເນື່ອງຈາກວ່າພົບຄວາມຫຍຸ້ງຍາກຫຼາຍປະການ ເປັນຕົ້ນແມ່ນການເຂົ້າເຖິງພື້ນທີ່, ຄວາມພ້ອມຂອງພາກສ່ວນຈັດຕັ້ງປະຕິບັດ ແລະ ຂາດການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ. ຈົນມາເຖິງປີ 2008, ລັດຖະບານໄດ້ແຕ່ງຕັ້ງກຸ່ມພາກສ່ວນທີ່ກ່ຽວຂ້ອງ ເພື່ອທົບທວນຄືນການຈັດຕັ້ງວຽກງານຜ່ານມາ ເພື່ອປັບປຸງຄູ່ມືວິທີການໃໝ່ "ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ" ໂດຍເລັ່ງໃສ່ການມີສ່ວນຮ່ວມຂອງປະຊາຊົນພາຍໃນທ້ອງຖິ່ນ ເພື່ອໃຫ້ໄດ້ຮັບຜົນດີກວ່າເກົ່າ.

ຈຸດປະສົງຫຼັກໃນການສຶກສາຄົ້ນຄວ້າຄັ້ງນີ້:(1). ເພື່ອສຶກສາຜົນກະທົບນະໂຍບາຍທີ່ດິນຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນໃນເຂດພູດອຍ. (2). ເພື່ອເປັນການວິເຄາະຄວາມຫຼາກຫຼາຍຜົນໄດ້ຮັບຈາກການຈັດຕັ້ງປະຕິບັດວຽກງານການວາງແຜນນຳໃຊ້ທີ່ດິນທີ່ໄດ້ຈັດຕັ້ງປະຕິບັດຜ່ານມາ.ພ້ອມທັງປະເມີນລະດັບການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ.ຊຶ່ງໄດ້ຄັດເລືອກເອົາ3ບ້ານພາຍໃນເມືອງໂພນໄຊ ແຂວງ ຫຼວງພະບາງ. ໃນຈຳນວນສອງບ້ານທຳອິດແມ່ນສຳເລັດການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າ ແລະ ບ້ານສຸດທ້າຍຍັງບໍ່ທັນໄດ້ສຳເລັດກິດຈະກຳດັ່ງກ່າວແຕ່ເປັນບ້ານເປົ້າໝາຍທີ່ໄດ້ທົດລອງກິດຈະກຳການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມແລ້ວ.

ຈາກການສຶກສາໃນຄັ້ງນີ້ໄດ້ຊີ້ໃຫ້ເຫັນວ່າ ວຽກງານມອບດິນມອບປ່າ ທີ່ໄດ້ຈັດຕັ້ງປະຕິບັດຜ່ານມາແມ່ນບໍ່ໄດ້ມີຜົນກະທົບໂດຍກົງ ຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນພາຍໃນທ້ອງຖິ່ນ. ເນື່ອງຈາກວ່າຂະບວນການວາງແຜນນຳໃຊ້ທີ່ດິນບໍ່ໄດ້ເຂັ້ມງວດ ຄືດັ່ງທີ່ໄດ້ລະບຸໄວ້ໃນເອກະສານ. ໂດຍພື້ນຖານແລ້ວ, ການຂຶ້ນທະບຽນທີ່ດິນທຳການຜະລິດ ຂອງແຕ່ລະຄອບຄົວນັ້ນ ແມ່ນລະບຸພຽງແຕ່ດິນຈຳນວນໜຶ່ງທີ່ຕັ້ງຢູ່ໃກ້ກັບເສັ້ນທາງ ແລະ ສະດວກໃນການເຂົ້າເຖິງ ເພື່ອຫຼີກລ້ຽງການເສຍພາສີຈຳນວນຕອນດິນ. ແຕ່ກໍ່ຍັງມີດິນຈຳນວນຫຼາຍຕອນທີ່ຢູ່ໄກບ້ານບໍ່ໄດ້ຮັບການຂຶ້ນທະບຽນທີ່ດິນແຕ່ຢ່າງໃດ, ຊຶ່ງເຮັດໃຫ້ເຈົ້າຂອງດິນດັ່ງກ່າວ ຍັງສາມາດສືບຕໍ່ທຳການຜະລິດເຮັດໄຮ່ເລື່ອນລອຍຢູ່. ເນື່ອງຈາກລະດັບການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນຍັງຕ່ຳເຮັດໃຫ້ຄວາມຮັບຮູ້ ແລະ ການສະແດງຄຳຄິດຄຳເຫັນກ່ຽວກັບວຽກງານດັ່ງກ່າວຍັງຕ່ຳ. ເວົ້າລວມແລ້ວ, ກິດຈະກຳການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າໃນເມື່ອກ່ອນ ແລະ ວຽກງານການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມໃນປະຈຸບັນ ເຫັນໄດ້ວ່າລະດັບການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ ແມ່ນເພີ່ມຂຶ້ນຕາມລຳດັບເຖິງແມ້ວ່າຈະຄ່ອຍໆເພີ່ມຂຶ້ນ ແລະ ບໍ່ໄດ້ແຕກໂຕນກັນຫຼາຍກໍ່ຕາມ.

---

[1] ສູນຄົ້ນຄວ້ານະໂຍບາຍ ກະສິກຳ ແລະ ປ່າໄມ້, ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ (NAFRI)

[2] ແຜນງານໂຄງການ Catch-Up, NAFRI-IRD-CIFOR

[3] ມະຫາວິທະຍາໄລ Queensland (ປະເທດອົດສະຕາລີ, Australia)

[4] ສະຖາບັນຄົ້ນຄວ້າ ເພື່ອການພັດທະນາ (IRD) ແຫ່ງປະເທດຝຣັ່ງ, ສູນຄົ້ນຄວ້າປ່າໄມ້ນາໆຊາດ (CIFOR) ແຫ່ງປະເທດອິນໂດເນເຊຍ

# Monitoring participatory land use planning for better impact on landscapes and livelihoods

Case studies in Nambor, Sobchia and Pakhok villages, Phonxay district, Luang Prabang province

*Bounthanom Bouahom[1,2,] Jeremy Bourgoin[2,3], Guillaume Lestrelin[2,4], Jean-Christophe Castella[2,4]*

## Abstract

Since the early 1990s, a Land Use Planning and Land Allocation (LUP/LA) Programme has been implemented throughout Laos in order to increase land tenure security, to stabilize shifting cultivation, increase forest cover and to avoid the negative impacts of deforestation as to protect the environment in a country that is still rich in forest resources. LUP/LA implementation consists in land use planning, forest and land classification, and land allocation - through the provision of temporary land use certificates to individual household. According to various studies, LUP/LA implementation in Laos did not always encounter the success predicted by the Laotian government. During the decade from 1995 to 2005 LUP/LA continued in most provinces, after which there was a slowdown of activity because it had been undertaken in the majority of accessible villages and there was a marked decrease in funds made available by the government of Laos for LUP/LA in more remote villages. In 2008, a technical advisory group was formed to develop new approaches and procedures and prepare an improved manual on Participatory Land Use Planning (PLUP). The new approach described in this manual concentrates on participatory land use zoning at the village and village cluster levels by using modern technologies such as GPS and GIS.

At this period of transition between LUP/LA and PLUP, our main research objective was to assess the impact of land policy on livelihoods in the uplands of Laos, in particular, to analyze the diversity and the outcomes of LUP/LA implementation. Three villages of Phonxay district of Luangphabang province were selected as study sites. In the two former villages, LUP/LA has been implemented at different times and through different approaches. In the latter village, LUP/LA had not been implemented but the village had been selected for a first experimentation of the new PLUP approach.

The research found that LUP/LA did not influence much in term of livelihood. The land use planning process did not restrict the village agricultural land. Basically, the land use planning did officialize the distribution of the different land uses that existed previously. The land declared by each family during land allocation depended mainly on their reluctance to pay taxes and on the priority given to plots close to the road for registration. As a consequence the remote plots, where shifting cultivation is still practiced, were often left unregistered. The evolution of village land use planning and practices during the past decade from early LUP/LA to pilot implementation of PLUP has been accompanied by a slight increase in local participation.

[1] Agriculture and Forestry Policy Research Centre (AFPRC), National Agriculture and Forestry Research Institute (NAFRI), Vientiane, Lao PDR

[2] Catch-Up Program (Comprehensive Analysis of Trajectories of Change in the Uplands), NAFRI-IRD-CIFOR, Vientiane, Lao PDR

[3] University of Queensland (UQ, Australia)

[4] Institut de Recherche pour le Développement (IRD, France), Centre for International Forestry Research (CIFOR, Indonesia)

## 1. ພາກສະເໜີ

ອີງຕາມແນວທາງນະໂຍບາຍຂອງລັດຖະບານລາວ, ແນໃສ່ຫຼຸດຜ່ອນຄວາມທຸກຍາກ ແລະ ຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ, ເພື່ອເປັນການປົກຮັກສາ ຊັບພະຍາກອນທຳມະຊາດ ໂດຍມີນະໂຍບາຍຊຸກຍູ້ ສົ່ງເສີມກິດຈະກຳການປູກພືດເປັນສິນຄ້າ ແລະ ການປູກໄມ້ອຸດສະຫະກຳ. ພ້ອມທັງໄດ້ຈັດຕັ້ງທີມງານ ລົງຈັດຕັ້ງປະຕິບັດວຽກງານມອບດິນມອບປ່າ ເພື່ອເປັນການກຳນົດຂອບເຂດພື້ນທີ່ທຳການຜະລິດ ແລະ ກຳນົດພື້ນທີ່ຫວງຫ້າມທີ່ຊັດເຈນພາຍໃນທ້ອງຖິ່ນ. ຄຽງຄູ່ກັນນັ້ນ, ກໍ່ມີນະໂຍບາຍຍົກຍ້າຍບ້ານ ທີ່ຕັ້ງຢູ່ຫ່າງໄກສອກຫຼີກໃຫ້ຫຍັບເຂົ້າມາຢູ່ທາງລົດ ຫຼື ບ່ອນທີ່ສະດວກໃນການເຂົ້າເຖິງ ແລະ ເພື່ອເປັນການເຕົ້າໂຮມເອົາບ້ານນ້ອຍເຂົ້າເປັນບ້ານໃຫຍ່. ເຖິງແນວໃດກໍ່ຕາມ, ມັນບໍ່ເປັນເລື້ອງງ່າຍໃນການພັດທະນາເສດຖະກິດສັງຄົມ ຢູ່ເຂດພູດອຍຂອງລາວເນື່ອງຈາກວ່າການຜະລິດ ຂອງຊາວກະສິກອນສ່ວນໃຫຍ່ແມ່ນເພິ່ງພາທຳມະຊາດ ເປັນຫຼັກໂດຍທຳການຜະລິດແບບຖາງປ່າເຮັດໄຮ່ ອີງຕາມລັກສະນະທາງພື້ນທີ່ໃນເຂດພູດອຍ ທີ່ເປັນເຂດທຸລະການດານຍາກໃນການເຂົ້າເຖິງ, ລະບົບພື້ນຖານໂຄງລ່າງບໍ່ເອື້ອອຳນວຍ, ຂາດຕະຫຼາດ ແລະ ຂາດພະນັກງານວິຊາການ ສົ່ງເສີມຢູ່ຂັ້ນຮາກຖານ. ດັ່ງນັ້ນ, ລັດຖະບານຈຶ່ງໄດ້ເນັ້ນໃສ່ພັດທະນາເຂດຊົນນະບົດ, ໂດຍການປະຕິຮູບທີ່ດິນໃນເຂດຊົນນະບົດ. ຄືດັ່ງໃນຊຸມປີ 1990, ໄດ້ຈັດຕັ້ງປະຕິບັດວຽກງານ ແຜນງານການວາງແຜນນຳໃຊ້ທີ່ດິນ ແລະ ມອບດິນມອບປ່າຂຶ້ນໃນທົ່ວປະເທດ. ໃນເມື່ອກ່ອນການຈັດຕັ້ງປະຕິບັດວຽກງານແບ່ງດິນແບ່ງປ່າ ແມ່ນໄດ້ເຮັດເປັນຂໍ້ຕົກລົງແບ່ງດິນແບ່ງປ່າ ໂດຍການຊ້ອງໜ້າກັນລະຫວ່າງ ອຳນາດການປົກຄອງບ້ານ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຊຶ່ງໄດ້ກຳນົດເອົາຂອບເຂດຊາຍແດນບ້ານ, ພື້ນທີ່ທີ່ເໝາະສົມໃຫ້ແກ່ການຜະລິດກະສິກຳ ແລະ ກຳນົດພື້ນທີ່ສະຫງວນ ແລະ ເຂດພື້ນຟູ. ຈົນມາເຖິງໄລຍະໜຶ່ງໄດ້ປ່ຽນຊື່ມາເປັນວຽກງານມອບດິນມອບປ່າ ເພື່ອເປັນການມອບທີ່ດິນ ທຳການຜະລິດກະສິກຳໃຫ້ແຕ່ລະຄອບຄົວ. ໃນນັ້ນ, ເມືອງຊຽງເງິນ ແຂວງຫຼວງພະບາງ ແລະ ແຂວງໄຊຍະບູລີເປັນແຂວງທຳອິດທີ່ໄດ້ລິເລີ່ມຈັດຕັ້ງປະຕິບັດວຽກງານມອບດິນມອບປ່າໃນລາວ. ຊຶ່ງຈຸດປະສົງໃນການວາງແຜນນຳໃຊ້ທີ່ດິນ ແລະ ມອບດິນມອບປ່າ ແມ່ນເພື່ອເປັນການເພີ່ມສິດ ໃນການຖືຄອງທີ່ດິນ, ຫຼຸດຜ່ອນບັນຫາຂັດແຍ່ງທີ່ດິນ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດສັນຊັບພະຍາກອນທຳມະຊາດ, ໂດຍການກຳນົດ ແລະ ແບ່ງເຂດດິນທຳການຜະລິດໃນລະດັບບ້ານ. ໂດຍມີການແບ່ງເຂດດິນທຳການຜະລິດ, ຊຶ່ງປະກອບມີເຂດປ່າສະຫງວນ, ປ່າຊົມໃຊ້, ປ່າຟື້ນຟູ, ປ່າຜະລິດ, ປ່າສັກສິດ ແລະ ພື້ນທີ່ທຳການຜະລິດກະສິກຳຕ່າງໆພາຍໃນບ້ານ. ຫຼັງຈາກນັ້ນ, ກໍ່ໄດ້ມອບໃບຢັ້ງຢືນ ການນຳໃຊ້ທີ່ດິນຊົ່ວຄາວໃຫ້ແຕ່ລະຄອບຄົວເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ໃນໄລຍະເວລາ 3 ປີ ບໍ່ໃຫ້ປະລະພື້ນທີ່. ຖ້າຫາກຄອບຄົວໃດສາມາດທຳການຜະລິດແບບເຮັດໄຮ່ຄົງທີ່ໄດ້ທາງອຳນາດການປົກຄອງ ພາຍໃນທ້ອງຖິ່ນກໍ່ຈະອອກໃບຕາດິນຖາວອນໃຫ້ໃນຂັ້ນຕອນການຈັດຕັ້ງປະຕິບັດຕໍ່ໜ້າ.

ຈົນມາເຖິງປີ 2000-2006, ການຈັດຕັ້ງປະຕິບັດວຽກງານວາງແຜນນຳໃຊ້ທີ່ດິນ ແລະ ມອບດິນມອບປ່າແມ່ນໄດ້ຄ່ອຍໆ ຢຸດສະງັດລົງເນື່ອງ

ຈາກວ່າຂາດການປະເມີນຕິດຕາມຜົນພາຍ ຫຼັງສຳເລັດກິດຈະກຳ, ຂາດງົບປະມານຈາກລັດ ຖະບານ, ຂາດບຸກຄະລາກອນທີ່ມີຄວາມຮູ້ຄວາມ ສາມາດ ແລະ ຈຳກັດເວລາໃນການຈັດຕັ້ງ ປະຕິບັດ. ຈາກຫຼາຍໆບົດຮຽນຂອງການຈັດຕັ້ງ ປະຕິບັດວຽກງານການວາງແຜນນຳໃຊ້ທີ່ດິນ ແລະ ມອບດິນມອບປ່າທີ່ຜ່ານມາຍັງມີບັນຫາ ຂໍ້ຄົງຄ້າງຫຼາຍຢ່າງທີ່ເຮັດໃຫ້ວຽກງານບໍ່ໄດ້ຮັບ ໝາກຜົນດີເທົ່າທີ່ຄວນ, ເນື່ອງຈາກວ່າຂະບວນ ການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າ ທີ່ໄດ້ດຳເນີນໃນແຕ່ລະທ້ອງຖິ່ນ ແມ່ນມີຄວາມ ແຕກຕ່າງກັນທາງດ້ານມາດຖານ, ວິທີການ ແລະ ລວມໄປ ເຖິງການອອກແບບວາງແຜນທີ່ຂາດ ການມີສ່ວນຮ່ວມຂອງປະຊາຊົນ ພາຍໃນທ້ອງ ຖິ່ນ (ການຕັດສິນໃຈ). ດັ່ງນັ້ນຈຶ່ງເຮັດໃຫ້ພາຍຫຼັງ ສຳເລັດວຽກງານມອບດິນມອບປ່າ ແລ້ວຈຶ່ງເກີດ ມີບັນຫາການຂັດແຍ່ງທີ່ດິນ ນັບມື້ນັບເພີ່ມຂຶ້ນ, ຊຶ່ງບັນຫາດັ່ງກ່າວນັ້ນພົວພັນ ເຖິງຫຼາຍປັດໄຈທີ່ ກ່ຽວຂ້ອງກັບນະໂຍບາຍຂອງລັດຖະບານໃນ ການສ້າງຕັ້ງກຸ່ມບ້ານພັດທະນາ ແລະ ຢຸດຕິການ ຖາງປ່າເຮັດໄຮ່ເລື່ອນລອຍ, ໂດຍການຈຳກັດພື້ນ ທີ່ທຳການຜະລິດ. ເຖິງຢ່າງໃດກໍ່ຕາມ, ພາຍຫຼັງ ທີ່ປະຊາຊົນພາຍໃນທ້ອງຖິ່ນຍົກຍ້າຍຖິ່ນຖານ ຈາກເຂດຫ່າງໄກສອກຫຼີກລົງມາອາໃສຢູ່ແຄມ ທາງລົດບ່ອນທີ່ສະດວກ ໃນການເຂົ້າເຖິງນັ້ນເຮັດ ໃຫ້ປະຊາຊົນຜູ້ທີ່ຍ້າຍມາຢູ່ໃໝ່ ກັບປະຊາຊົນທີ່ ຢູ່ບ້ານເກົ່ານັ້ນ ເກີດມີຂໍ້ຂັດແຍ່ງກັນທາງດ້ານການ ນຳໃຊ້ທີ່ດິນເນື່ອງຈາກວ່າບໍ່ມີດິນທຳການຜະລິດ ແຮໄວ້ໃຫ້ແກ່ຄອບຄົວ ທີ່ຍ້າຍມາຢູ່ໃໝ່ ແລະ ເຮັດ ໃຫ້ພື້ນທີ່ທຳການຜະລິດມີຈຳກັດ.

ຈົນມາເຖິງຕົ້ນປີ 2009, ລັດຖະບານໄດ້ ທົບທວນຄືນເຖິງກິດຈະກຳທີ່ຜ່ານມາຂອງວຽກ ງານວາງແຜນນຳໃຊ້ ແລະ ມອບດິນມອບປ່າໂດຍ ໄດ້ຈັດຕັ້ງທີມງານທີ່ມາຈາກຫຼາຍພາກສ່ວນທີ່ກ່ຽວ ຂ້ອງເຮັດວຽກຮ່ວມກັນເປັນຕົ້ນແມ່ນກະຊວງກະ ສິກຳ ແລະ ປ່າໄມ້ ແລະ ອົງການຄຸ້ມຄອງທີ່ດິນ ທົບທວນຄືນເຖິງສະພາບບັນຫາຕ່າງໆທີ່ເກີດ ຂຶ້ນ. ບັນຫາທີ່ດິນແມ່ນເປັນບັນຫາທີ່ຍັງຄົງຄຸມ ເຄືອຊຶ່ງມັນເປັນບັນຫາທີ່ສຳຄັນຫຼາຍ ຕໍ່ກັບຄວາມ ຢູ່ດີກິນດີຂອງປະຊາຊົນລາວສ່ວນໃຫຍ່ໃນທົ່ວ ປະເທດ ຊຶ່ງພວກເຂົາເຈົ້າເຫຼົ່ານັ້ນ ເກືອບທັງໝົດ ອາໄສທຳມະຊາດ ແລະ ເຮັດວຽກຢູ່ໃນເຂດຊົນ ນະບົດຫ່າງໄກສອກຫຼີກ. ດັ່ງນັ້ນ, ທີ່ດິນຍັງຄົງ ເປັນແຫຼ່ງຊັບພະຍາກອນທີ່ສຳຄັນທາງດ້ານອາ ຫານ, ສ້າງລາຍໄດ້, ວິຖີຊີວິດລວມທັງຄວາມປອດ ໄພຂອງຄອບຄົວ. ທາງທີມງານຈຶ່ງໄດ້ພັດທະນາ ແລະ ປັບປຸງວິທີການອັນໃໝ່ໃນການຈັດຕັ້ງປະ ຕິບັດວຽກງານວາງແຜນນຳໃຊ້ທີ່ດິນ ໂດຍການ ສ້າງເປັນຄູ່ມືໃໝ່ທີ່ມີຊື່ວ່າ "ການວາງແຜນນຳໃຊ້ ທີ່ດິນແບບມີສ່ວນຮ່ວມ", ປະກອບດ້ວຍ 10 ຂັ້ນ ຕອນ: ການສ້າງແຜນທີ່ແບບມີສ່ວນຮ່ວມ,ການ ລົງສຳຫຼວດພື້ນທີ່ຕົວຈິງ, ການປຶກສາຫາລືກັບ ທາງອຳນາດການປົກຄອງບ້ານການ, ສ້າງຂໍ້ຕົກ ລົງການນຳໃຊ້ທີ່ດິນ ແລະ ການປະເມີນຜົນແບບ ມີສ່ວນຮ່ວມ. ຈຸດປະສົງຫຼັກຂອງຄູ່ມືດັ່ງກ່າວ ແມ່ນເພື່ອເປັນການ ເພີ່ມການມີສ່ວນຮ່ວມຂອງ ປະຊາຊົນພາຍໃນທ້ອງຖິ່ນໃຫ້ມີສ່ວນຮ່ວມໃນ ການອອກຄຳຄິດຄຳເຫັນ, ວາງແຜນ ແລະ ສະເໜີ ວິທີການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນພາຍໃນ ຊຸມຊົນຮ່ວມກັນ ແລະທັງເປັນການອຳນວຍຄວາມ ສະດວກໃຫ້ແກ່ຂະບວນການລິເລີ່ມການວາງແຜນ ແລະ ດຳເນີນງານໃນຫຼາຍລະດັບທີ່ແຕກຕ່າງກັນ.

## 2. ຈຸດປະສົງ

ຈຸດປະສົງ ຂອງການສຶກສາຄົ້ນຄວ້າໃນຄັ້ງນີ້ແມ່ນເພື່ອສ້າງຄວາມເຂົ້າໃຈ ເຖິງສະພາບບັນຫາໃນການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າທີ່ໄດ້ດໍາເນີດໃນໄລຍະຜ່ານມາ. ພ້ອມດຽວກັນນັ້ນ, ກໍ່ເພື່ອສຶກສາເຖິງຜົນທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດກິດຈະກໍາດັ່ງກ່າວ (ທັງດ້ານບວກ ແລະ ດ້ານລົບ) ໂດຍການສຶກສາເຖິງລະດັບການມີສ່ວນຮ່ວມຂອງປະຊາຊົນພາຍໃນທ້ອງຖິ່ນ ໃນຂະບວນການວາງແຜນນໍາໃຊ້ທີ່ດິນ ແລະ ການກໍານົດພື້ນທີ່ທໍາການຜະລິດຕ່າງໆ.

• ເພື່ອປະເມີນຜົນທີ່ໄດ້ຮັບ ພາຍຫຼັງສໍາເລັດກິດຈະກໍາ ວຽກງານມອບດິນມອບປ່າ ແລະ ການວາງແຜນນໍາໃຊ້ທີ່ດິນແບບມີສ່ວນຮ່ວມ.

• ເພື່ອປະເມີນລະດັບການມີສ່ວນຮ່ວມຂອງປະຊາຊົນພາຍໃນທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າ ແລະ ການວາງແຜນນໍາໃຊ້ທີ່ດິນ.

## 3. ວິທີການ

### 3.1 ທົບທວນເອກະສານ

ທົບທວນເອກະສານ ຈາກຫຼາຍແຫຼ່ງເປັນຕົ້ນແມ່ນເອກະສານ ລະບຽບກົດໝາຍກ່ຽວກັບສິດການນໍາໃຊ້ທີ່ດິນ, ບົດລາຍງານການສຶກສາຄົ້ນຄວ້າກ່ຽວກັບປະເດັນທາງດ້ານທີ່ດິນ (ການສໍາປະທານທີ່ດິນ, ການຄຸ້ມຄອງທີ່ດິນ ແລະ ອື່ນໆ), ທົບທວນຄືນກ່ຽວກັບຄູ່ມື ການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າ ພ້ອມທັງສຶກສາຄູ່ມືໃໝ່ກ່ຽວກັບວຽກງານການວາງແຜນນໍາໃຊ້ທີ່ດິນແບບມີສ່ວນຮ່ວມ ທີ່ໄດ້ລິເລີ່ມຈັດຕັ້ງປະຕິບັດໃນປີ 2010.

### 3.2. ການເກັບກໍາຂໍ້ມູນ

ໄດ້ລົງເກັບກໍາຂໍ້ມູນ ໂດຍການປຶກສາໂອ້ລົມກັບພາກສ່ວນທີ່ກ່ຽວຂ້ອງກັບວຽກງານວາງແຜນນໍາໃຊ້ທີ່ດິນ, ໄດ້ແກ່ພາກສ່ວນຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ແລະ ຫ້ອງການຄຸ້ມຄອງທີ່ດິນ. ໂດຍການສ້າງຮ່າງແບບ ສອບຖາມຂຶ້ນ ຊຶ່ງເນື້ອໃນຕົ້ນຕໍແມ່ນສຶກສາ ເຖິງປະຫວັດການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າ, ພາກສ່ວນຜູ້ເຂົ້າຮ່ວມ, ໄລຍະເວລາ, ພ້ອມທັງສຶກສາເຖິງຄວາມຮັບຮູ້ຂອງພາກສ່ວນທີ່ກ່ຽວຂ້ອງ,ບັນຫາຂໍ້ຄົງຄ້າງທີ່ໄດ້ຈັດຕັ້ງປະຕິບັດ.

ການຄັດເລືອກພື້ນທີ່ສຶກສາ ຄົ້ນຄວ້າແມ່ນອີງການປຶກສາໂອ້ລົມ ນໍາພາກສ່ວນທີ່ກ່ຽວຂ້ອງເຖິງປະຫວັດຄວາມເປັນມາໃນການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າ. ດັ່ງນັ້ນ, ຈຶ່ງໄດ້ຄັດເລືອກເອົາ 3 ບ້ານເປົ້າໝາຍສຶກສາຄົ້ນຄວ້າ (ບ້ານນໍ້າບໍ່, ບ້ານສິບເຈັ່ຍ ແລະ ບ້ານຜັກທົກ) ຂອງເມືອງໂພນໄຊ.

ການເກັບກໍາຂໍ້ມູນ ແມ່ນໄດ້ນໍາໃຊ້ແບບຟອມສອບຖາມ 2 ຮູບແບບ ເພື່ອສໍາພາດປະຊາຊົນຢູ່ບ້ານທີ່ໄດ້ສໍາເລັດກິດຈະກໍາມອບດິນມອບປ່າ ແລະ ບ້ານທີ່ບໍ່ໄດ້ສໍາເລັດ ຊຶ່ງຈະນໍາໃຊ້ແບບສອບຖາມປະຊາຊົນພາຍໃນທ້ອງຖິ່ນເປັນຈໍານວນ 30 ແບບສອບຖາມ/ບ້ານ. ນໍາໃຊ້ວິທີການ

ຊຸມຕົວຢ່າງແບບບັງເອີນ ໂດຍການສຶກສາຈາກຂໍ້ມູນທາງດ້ານປະເພດຖານະຄວາມຮັ່ງມີຂອງຄອບຄົວ, ຕໍາແໜ່ງ ແລະ ອາຍຸຫົວໜ້າຄອບຄົວ.

ນອກຈາກນີ້, ເພື່ອເປັນການທໍາຄວາມເຂົ້າໃຈພື້ນທີ່ຕົວຈິງແມ່ນໄດ້ລົງສໍາຫຼວດພື້ນທີ່ທໍາການຜະລິດ ແລະ ພື້ນທີ່ລ້ຽງສັດຂອງຊາວກະສິກອນ ພ້ອມທັງສໍາຫຼວດພື້ນທີ່ທີ່ມີບັນຫາການຍາດແຍ່ງທີ່ດິນ ຂອງຊາວກະສິກອນພາຍໃນບ້ານ.

### 3.3 ການວິເຄາະຂໍ້ມູນ

ນໍາໃຊ້ວິທີການວິເຄາະຂໍ້ມູນ ທາງດ້ານຄຸນນະພາບ ແລະ ປະລິມານ. ໂດຍການວິເຄາະຂໍ້ມູນທາງຄຸນນະພາບ ທີ່ໄດ້ຈາກການປຶກສາໂອ້ລົມນໍາພາກສ່ວນທີ່ກ່ຽວຂ້ອງ, ການສອບຖາມຊາວກະສິກອນ ແລະ ການສັງເກດການໃນຂະບວນການ ຈັດຕັ້ງປະຕິບັດວຽກງານວາງແຜນນໍາໃຊ້ທີ່ດິນ. ພ້ອມດຽວກັນນັ້ນ, ກໍ່ໄດ້ວິເຄາະຂໍ້ມູນທາງປະລິມານ ໂດຍການວິເຄາະຂໍ້ມູນທາງສະຖິຕິເນື້ອທີ່ທໍາການຜະລິດ ແລະ ຜົນຜະລິດທີ່ໄດ້ຮັບ. ສໍາລັບການປະເມີນລະດັບການມີສ່ວນຮ່ວມຂອງປະຊາຊົນ ແມ່ນມີການສັງເກດການໃນຂະນະທີ່ມີການຈັດຕັ້ງປະຕິບັດວຽກງານວາງແຜນນໍາໃຊ້ທີ່ດິນໃນແຕ່ລະບາດກ້າວ.

## 4. ຜົນທີ່ໄດ້ຮັບ

### 4.1 ຄວາມຫຼາກຫຼາຍໃນການຈັດຕັ້ງປະຕິບັດ

ຜົນໄດ້ຮັບຈາກການສຶກສາ ຄົ້ນຄວ້າເຫັນໄດ້ວ່າການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າ ແລະ ວາງແຜນນໍາໃຊ້ທີ່ດິນແບບມີສ່ວນຮ່ວມແມ່ນໄດ້ຈັດຕັ້ງປະຕິບັດດ້ວຍຫຼາຍວິທີການທີ່ແຕກຕ່າງກັນ ແລະ ໄດ້ຮັບຜົນແຕກຕ່າງກັນ. ດັ່ງໃນກໍລະນີຂະບວນການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າ ຢູ່ບ້ານນໍ້າບໍ່ທີ່ໄດ້ເລີ່ມຈັດຕັ້ງປະຕິບັດ ໃນປີ 2008 ໂດຍໄດ້ຮັບການສະໜັບສະໜູນຈາກພະແນກກະສິກໍາ ແລະ ປ່າໄມ້ແຂວງ. ຫຼັງຈາກນັ້ນ, ຫ້ອງການປົກຄອງເມືອງກໍ່ໄດ້ແຕ່ງຕັ້ງຄະນະກໍາມະການມອບດິນມອບປ່າຂຶ້ນຢ່າງເປັນທາງການ ຊຶ່ງຕາງໜ້າຈາກຫຼາຍພາກສ່ວນເຂົ້າຮ່ວມປະກອບດ້ວຍພະນັກງານຈາກພະແນກກະສິກໍາ ແລະ ປ່າໄມ້ແຂວງ, ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ຫ້ອງການຄຸ້ມຄອງທີ່ດິນ, ຫ້ອງການສຶກສາ, ກອງຫຼອນ ແລະ ຕໍາຫຼວດເມືອງຈໍານວນໜຶ່ງ. ບ້ານນໍ້າບໍ່ນັບວ່າເປັນບ້ານໜຶ່ງທີ່ໄດ້ສໍາເລັດທຸກຂັ້ນຕອນການມອບດິນມອບປ່າ ເນື່ອງຈາກວ່າຂະບວນການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າໄດ້ດໍາເນີນໄປເປັນເວລາ28ມື້ ໂດຍການມີສ່ວນຮ່ວມ ຂອງອໍານາດການປົກຄອງບ້ານ ແລະ ປະຊາຊົນພາຍໃນບ້ານ ຢ່າງພ້ອມພຽງ, ພ້ອມທັງໄດ້ອອກໃບຢັ້ງຢືນ ການນໍາໃຊ້ດິນຊົ່ວຄາວໃຫ້ແຕ່ລະຄອບຄົວຖືຄອງ. ແຕ່ເຖິງຢ່າງໃດກໍ່ຕາມ, ບ້ານນໍ້າບໍ່ເປັນບ້ານໜຶ່ງ ທີ່ພົບບັນຫາພາຍຫຼັງສໍາເລັດກິດຈະກໍາມອບດິນມອບປ່າ, ເນື່ອງຈາກວ່າຄອບຄົວທີ່ຍ້າຍມາຢູ່ກ່ອນໝູ່ໄດ້ຄອບຄອງເອົາດິນທໍາການຜະລິດ ແລະ ລວມໄປທັງດິນທີ່ຢູ່ອາໃສເປັນຈໍານວນຫຼວງຫຼາຍເພື່ອເກັບແຮໄວ້ໃຫ້ພີ່ນ້ອງຂອງຕົນເອງ ແລະ ຈໍານວນໜຶ່ງກໍ່ເກັບແຮໄວ້ຂາຍໃຫ້ຄອບຄົວທີ່ຍ້າຍມາຢູ່ໃໝ່ ຊຶ່ງເຮັດໃຫ້ລາຄາທີ່ດິນພາຍໃນບ້ານເພີ່ມສູງຂຶ້ນ.

ບ້ານສົບເຈ້ຍ ໄດ້ເລີ່ມຈັດຕັ້ງປະຕິບັດການມອບດິນມອບປ່າ ໃນປີ 1999 ໂດຍໄດ້ຮັບການ

ສະໜັບສະໜູນທຶນຮອນຈາກໂຄງການ EU ປະສານສົມທົບກັບທຶນຫ້ອງການປົກຄອງເມືອງ, ເປັນບ້ານທຳອິດພາຍໃນກຸ່ມ ບ້ານສົບເຈ້ຍທີ່ໄດ້ຈັດຕັ້ງປະຕິບັດວຽກງານມອບດິນມອບປ່າ, ແຕ່ວິທີການຈັດຕັ້ງປະຕິບັດ ແມ່ນຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ ເນື່ອງຈາກຈຳກັດໄລຍະເວລາໃນການຈັດຕັ້ງປະຕິບັດຕົວຈິງ ແລະ ຂາດການມີສ່ວນຮ່ວມຂອງປະຊາຊົນພາຍໃນທ້ອງຖິ່ນ. ດັ່ງນັ້ນ, ຈຶ່ງເຮັດໃຫ້ປະຊາຊົນພາຍໃນບ້ານບໍ່ສາມາດກຳເນື້ອໃນໄດ້. ພາຍຫຼັງສຳເລັດວຽກງານມອບດິນມອບປ່າມາໄດ້ໄລຍະໜຶ່ງ, ແລ້ວທາງອຳນາດການປົກຄອງເມືອງ ກໍ່ໄດ້ມີນະໂຍບາຍເຕົ້າໂຮມບ້ານນ້ອຍໃຫ້ເຂົ້າເປັນບ້ານໃຫຍ່ ໂດຍໄດ້ຜັກດັນໃຫ້ປະຊາຊົນບ້ານຫ້ວຍສີຍິວຍົກຍ້າຍລົງມາອາໄສຢູ່ບ້ານສົບເຈ້ຍໃນປີ 2008. ແຕ່ພາຍຫຼັງຍົກຍ້າຍບ້ານສຳເລັດແລ້ວປະຊາຊົນທັງສອງບ້ານບໍ່ສາມາດເຈລະຈາຕົກລົງກັນໄດ້ ເນື່ອງຈາກປະຊາຊົນບ້ານສົບເຈ້ຍບໍ່ເຫັນດີທີ່ຈະແບ່ງດິນທຳການຜະລິດໃຫ້ປະຊາຊົນບ້ານຫ້ວຍສີຍິວເພາະພວກເຂົາໄດ້ຮັບໃບນຳໃຊ້ທີ່ດິນຊົ່ວຄາວແລ້ວ. ດັ່ງນັ້ນ, ຈຶ່ງເຮັດໃຫ້ປະຊາຊົນທັງສອງບ້ານມີບັນຫາຂັດແຍ່ງທີ່ດິນກັນ. ສຸດທ້າຍປະຊາຊົນບ້ານຫ້ວຍສີຍິວຈຳເປັນຕ້ອງໄດ້ກັບຄືນໄປທຳການຜະລິດຢູ່ບ້ານເກົ່າຊຶ່ງໃຊ້ເວລາດົນໃນການເດີນທາງ.

ບ້ານຜັກທີກເປັນບ້ານທຳອິດ ຂອງໃນເມືອງໂພນໄຊທີ່ໄດ້ຈັດຕັ້ງປະຕິບັດວຽກງານການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ໂດຍໄດ້ຮັບການສະໜັບສະໜູນຈາກໂຄງການ TABI ຮ່ວມກັບອຳນາດການປົກຄອງເມືອງ, ຊຶ່ງເປັນການທົດສອບວິທີການອັນໃໝ່ ທີ່ໄດ້ລະບຸໄວ້ໃນຄູ່ມືການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ. ໂດຍແນໃສ່ວິທີການກຳນົດຂອບເຂດຊາຍແດນທີ່ເລີ່ມຈາກລະດັບກຸ່ມບ້ານໄປຫາລະດັບບ້ານພາຍຫຼັງທີ່ໄດ້ກຳນົດຂອບເຂດຊາຍແດນ ໃນລະດັບກຸ່ມບ້ານໄດ້ແລ້ວກໍ່ຈະໄດ້ລົງຈັດຕັ້ງປະຕິບັດວຽກງານວາງແຜນນຳໃຊ້ທີ່ດິນ ຢູ່ຂັ້ນບ້ານຄົບທຸກຂັ້ນຕອນ. ການວາງແຜນແຕ່ຂັ້ນຕອນການມອບດິນທຳການຜະລິດໃຫ້ແຕ່ລະຄອບຄົວຖືຄອງ, ທາງທີມງານແມ່ນຍັງຈະໄດ້ສືບຕໍ່ເກັບກຳຂໍ້ມູນ. ໂດຍລວມແລ້ວ, ສະພາບການນຳໃຊ້ທີ່ດິນ ພາຍໃນບ້ານແມ່ນບໍ່ມີບັນຫາການຂັດແຍ່ງທີ່ດິນກັນເນື່ອງຈາກວ່າທີ່ດິນທຳການຜະລິດພາຍໃນບ້ານແມ່ນຍັງເອື້ອອຳນວຍ ແລະ ພຽງພໍໃຫ້ແຕ່ລະຄອບຄົວທຳການຜະລິດ, ແຕ່ບັນຫາກໍ່ແມ່ນ ພື້ນທີ່ທຳການຜະລິດສ່ວນໃຫຍ່ແມ່ນເປັນເຂດຄ້ອຍຊັນ ແລະ ບໍ່ເໝາະສົມໃຫ້ແກ່ການປູກຝັງ. ດັ່ງນັ້ນ, ທາງອຳນາດການປົກຄອງບ້ານຈຶ່ງມີຄວາມສົນໃຈ ໃນກິດຈະກຳການລ້ຽງສັດທີ່ຄາດວ່າຈະຊ່ວຍ ໃຫ້ພວກເຂົາຫຼຸດພົ້ນອອກຈາກຄວາມທຸກຍາກໄດ້. ເຖິງແນວໃດກໍ່ຕາມ, ບັນຫາຂອບເຂດຊາຍແດນບ້ານທີ່ບໍ່ຈະແຈ້ງນັ້ນກໍ່ຍັງເປັນບັນຫາທີ່ຄຸມເຄືອຢູ່ ເພາະອຳນາດການປົກຄອງໃນແຕ່ລະບ້ານໃກ້ຄຽງ ແມ່ນຍຶດເອົາຂອບເຂດຊາຍແດນບ້ານ ທີ່ໄດ້ກຳນົດຂຶ້ນໃນເມື່ອກ່ອນ ຊຶ່ງບໍ່ມີຫຼັກຖານອ້າງອີງ ຫຼື ບໍ່ມີຂໍ້ຕົກລົງໃດໆ. ດັ່ງນັ້ນ, ຈຶ່ງເຮັດໃຫ້ປະຊາຊົນ ໃນບ້ານອື່ນໆລັກລອບເຂົ້າມາເກັບເຄື່ອງປ່າຂອງດົງ ແລະ ທຳການຜະລິດກາຍເຂດຊາຍແດນ.

ເຖິງຢ່າງໃດກໍ່ຕາມ, ບູລິມະສິດຫຼັກໃນການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າທີ່ໄດ້ຈັດຕັ້ງໃນທ້ອງຖິ່ນ ແມ່ນເພື່ອເປັນການແກ້ໄຂບັນ

ຫາຂໍ້ຂັດແຍ່ງທາງດ້ານທີ່ດິນລະຫວ່າງບ້ານທີ່ມີບັນຫາຈາກການຍົກຍ້າຍຖິ່ນຖານ. ເນື່ອງຈາກວ່າໃນເມື່ອກ່ອນທາງພາກສ່ວນທີ່ກ່ຽວຂ້ອງໃນຂັ້ນເມືອງບໍ່ມີຂໍ້ມູນ ແລະ ບໍ່ໄດ້ກຳນົດເຂດການນຳໃຊ້ທີ່ດິນໃນລະດັບເມືອງມາກ່ອນ. ດັ່ງນັ້ນ, ຈຶ່ງເຮັດໃຫ້ເກີດມີບັນຫາການຍາດແຍ່ງທີ່ດິນ ຕາມມາພາຍຫຼັງ ແລະ ທາງອຳນາດການປົກຄອງພາຍໃນທ້ອງຖິ່ນກໍ່ບໍ່ສາມາດໄກ່ເກ່ຍບັນຫາດັ່ງກ່າວນັ້ນໄດ້, ເພາະເປັນບັນຫາທີ່ສັບຊ້ອນ ແລະ ລະອຽດອ່ອນທີ່ຍາກຈະແກ້ໃຂແຕ່ພຽງຝ່າຍດຽວ.

ຕາຕະລາງ 1: ສົມທຽບບາດກ້າວຈັດຕັ້ງປະຕິບັດທີ່ໄດ້ລະບຸໄວ້ໃນຄູ່ມື

| ບາດກ້າວ | ບ້ານນ້ຳບໍ່ | ບ້ານສົບເຈ້ຍ |
|---|---|---|
| 1. ກະກຽມກ່ອນການຈັດຕັ້ງປະຕິບັດ | - ຝຶກອົບຮົມໃຫ້ທີມງານ 7 ມື້<br>- ໄດ້ທຶນສະໜັບສະໜູນຈາກຫ້ອງການປົກ ຄອງເມືອງ | - ບໍ່ໄດ້ຈັດຝຶກອົບຮົມ<br>- ໄດ້ຮັບທຶນຈາກໂຄງການ EU ສົມທົບກັບ ຫ້ອງການປົກຄອງເມືອງ |
| 2. ລົງສຳຫຼວດຂອບເຂດຊາຍແດນບ້ານ ແລະ ກຳນົດແບ່ງເຂດນຳໃຊ້ທີ່ດິນ ແລະ ປ່າໄມ້ | - ປຶກສາຫາລືກັບອຳນາດການປົກຄອງບ້ານ ເຖິງຂອບເຂດຊາຍແດນບ້ານ<br>- ທີມງານ ແລະ ປະຊາຊົນລົງສຳຫຼວດວັດແທກພື້ນທີ່ຕົວຈິງທີ່ມີຄວາມແມ້ນຍຳ | - ປຶກສາຫາລືກັບອຳນາດການປົກຄອງບ້ານ ເຖິງຂອບເຂດຊາຍແດນບ້ານ<br>- ທີມງານ ແລະປະຊາຊົນລົງສຳຫຼວດວັດ ແທກແບບກະຕວງບໍ່ໄດ້ແທກຕົວຈິງ |
| 3. ເກັບກຳ ແລະ ວິເຄາະຂໍ້ມູນທີ່ໄດ້ມາ | - ເກັບກຳຂໍ້ມູນການນຳໃຊ້ທີ່ດິນນຳອຳນາດການປົກຄອງບ້ານ<br>- ເກັບກຳຂໍ້ມູນການນຳໃຊ້ທີ່ດິນຂອງແຕ່ລະຄອບຄົວ | - ເກັບກຳຂໍ້ມູນການວາງແຜນນຳໃຊ້ທີ່ດິນນຳອຳນາດການປົກຄອງບ້ານ<br>- ບໍ່ໄດ້ເກັບກຳຂໍ້ມູນການນຳໃຊ້ທີ່ດິນຂອງແຕ່ລະຄອບຄົວ |
| 4. ການວາງແຜນນຳໃຊ້ທີ່ດິນ | ກຳນົດເຂດການນຳໃຊ້ທີ່ດິນ ແລະ ປ່າໄມ້ (ປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ, ປ່າຟື້ນຟູ ) | ການກຳນົດເຂດນຳໃຊ້ທີ່ດິນ ແລະປ່າໄມ້ບ້ານຍັງບໍ່ທັນຈະແຈ້ງ ແລະບໍ່ລະອຽດ |

| | | |
|---|---|---|
| 5. ມອບດິນມອບປ່າ | *ບໍ່ໄດ້ຈັດຕັ້ງປະຕິບັດເທື່ອ* | *ບໍ່ໄດ້ຈັດຕັ້ງປະຕິບັດເທື່ອ* |
| 6. ລົງສຳຫຼວດ ເນື້ອທີ່ທຳການຜະລິດ | ພະນັກງານຈາກຫ້ອງການສົ່ງເສີມກະສິກຳ, ຫ້ອງການຄຸ້ມຄອງທີ່ດິນ, ຫ້ອງການສຶກສາ, ປ້ອງກັນ/ກອງຫຼອນ ແລະ ເຈົ້າຂອງດິນ | ພະນັກງານຈາກຫ້ອງການສົ່ງເສີມກະສິກຳ ແລະ ເຈົ້າຂອງດິນ |
| 7. ກະກຽມປຶ້ມບັນທຶກການກຳນົດເຂດນຳໃຊ້ທີ່ດິນ ແລະ ປ່າໄມ້ ພ້ອມທັງແຈກຢາຍສິດນຳໃຊ້ທີ່ໃຫ້ແຕ່ລະຄອບຄົວ | ປະຊາຊົນໄດ້ຮັບໃບນຳໃຊ້ທີ່ດິນຊົ່ວຄາວ (ກວມ 63% ຂອງຄອບຄົວທີ່ຖືຄອງທີ່ດິນ) | ປະຊາຊົນໄດ້ຮັບໃບນຳໃຊ້ທີ່ດິນຊົ່ວຄາວ (ກວມ 54% ຂອງຄອບຄົວທີ່ຖືຄອງທີ່ດິນ) |
| *8. ສັງລວມຂໍ້ມູນ ວຽກງານມອບດິນມອບປ່າໃຫ້ເປັນລະບົບ* | *ບໍ່ໄດ້ຈັດຕັ້ງປະຕິບັດເທື່ອ* | *ບໍ່ໄດ້ຈັດຕັ້ງປະຕິບັດເທື່ອ* |
| 9. ແຈກຢາຍປຶ້ມລາຍງານ ວຽກງານມອບດິນມອບປ່າ | ປຶ້ມລາຍງານ ວຽກງານມອບດິນມອບປ່າ ມີຢູ່ຫ້ອງການກະສິກຳເມືອງ ແຕ່ບໍ່ມີຈັກຊຸດຢູ່ບ້ານ | ມີປຶ້ມລາຍງານ ວຽກງານມອບດິນມອບປ່າ ມີຢູ່ຫ້ອງການກະສິກຳເມືອງ ແລະ ບ້ານ |
| *10. ການຕິດຕາມ ແລະ ປະເມີນ* | *ບໍ່ໄດ້ຈັດຕັ້ງປະຕິບັດເທື່ອ* | *ບໍ່ໄດ້ຈັດຕັ້ງປະຕິບັດເທື່ອ* |

## 4.2 ການຄ້ຳປະກັນພື້ນທີ່

ຈາກການສຶກສາຄົ້ນຄວ້າ ເຫັນໄດ້ວ່າແຕ່ລະຄອບຄົວໄດ້ຮັບດິນມາຈາກດິນມູນ, ຈາກການຊື້, ຄອບຄົວເປັນຜູ້ແບ່ງປັນໃຫ້, ອຳນາດການປົກຄອງບ້ານເປັນຜູ້ແບ່ງໃຫ້ ແລະ ຈຳນວນໜຶ່ງກໍ່ໄດ້ມາຈາກຍາດພີ່ນ້ອງ ເປັນຜູ້ແບ່ງໃຫ້. ເຖິງແນວໃດກໍ່ຕາມ, ຮູບແບບການຖືຄອງທີ່ດິນ ຂອງປະຊາຊົນໃນເຂດຊົນນະບົດ ແມ່ນໄດ້ຈັບຈອງເອົາດິນທຳການຜະລິດໂດຍການຖາງໄຮ່ໝູນວຽນ ທີ່ໄດ້ສືບທອດກັນມາຫຼາຍຊົ່ວຄົນແລ້ວ ໃນຮູບແບບເຈົ້າກົກເຈົ້າເລົ່າຄຸ້ມຄອງ.

ພາຍຫຼັງສຳເລັດ ກິດຈະກຳມອບດິນມອບປ່າໃນຂັ້ນບ້ານແລ້ວທາງຫ້ອງການທີ່ດິນເມືອງໄດ້ອອກໃບນຳໃຊ້ທີ່ດິນຊົ່ວຄາວ ໃຫ້ແຕ່ລະຄອບຄົວຖືຄອງ 3-4 ຕອນດິນເພື່ອທຳການຜະລິດ, ໂດຍສົ່ງເສີມໃຫ້ຊາວກະສິກອນ ຫັນມາປູກພືດ

ເປັນສິນຄ້າຕາມນະໂຍບາຍຢຸດຕິຖາງປ່າເຮັດໄຮ່ເລື່ອນລອຍ. ເຖິງຢ່າງໃດກໍ່ຕາມ, ຈຳນວນຄອບຄົວທີ່ໄດ້ຮັບໃບນຳໃຊ້ທີ່ດິນຊົ່ວຄາວນັ້ນກວມອັດຕາສູງ (67%) ຊຶ່ງເຮັດພາຍຫຼັງທີ່ຊາວກະສິກອນໄດ້ຮັບໃບນຳໃຊ້ທີ່ດິນຊົ່ວຄາວນັ້ນ ເປັນການເພີ່ມມູນຄ່າລາຄາທີ່ດິນໃຫ້ສູງຂຶ້ນ ເຮັດໃຫ້ຊາວກະສິກອນພາຍໃນທ້ອງຖິ່ນເກີດມີບັນຫາການຄ້າຂາຍທີ່ດິນເກີດຂຶ້ນ. ນອກຈາກນັ້ນ, ເຮັດໃຫ້ມີຫຼາຍຄອບຄົວທຸກຍາກ ທີ່ບໍ່ມີທຶນຮອນພຽງພໍຊື້ດິນທຳການຜະລິດ ບໍ່ມີຄວາມອາດສາມາດທີ່ຈະເຮັດການຜະລິດໄດ້ຊຶ່ງ ມັນໄດ້ສົ່ງຜົນສະທ້ອນໃຫ້ຄອບຄົວເຫຼົ່ານັ້ນບໍ່ສາມາດປັບປຸງຊີວິດການເປັນຢູ່ໄດ້ ແລະ ເປັນການເພີ່ມຄວາມທຸກຍາກໃຫ້ເຂົາເຈົ້າຕື່ມອີກ. ແຕ່ໃນບາງພື້ນທີ່, ຊາວກະສິກອນພາຍໃນທ້ອງຖິ່ນ ກໍ່ຍັງໄດ້ຖືຄອງທີ່ດິນຕົວຈິງ ຫຼາຍກວ່າຈຳນວນທີ່ຕົນເອງໄດ້ຂຶ້ນທະບຽນທີ່ດິນນຳທີມງານ ເພື່ອເປັນການຫຼີກລ້ຽງ ແລະ ຫຼຸດຜ່ອນຈຳນວນຕອນດິນທີ່ເສຍພາສີນຳຫ້ອງການການເງິນເມືອງ. ດັ່ງນັ້ນ, ຈຶ່ງເຫັນໄດ້ວ່າ ພື້ນທີ່ຫ່າງໄກສອກຫຼີກ ທີ່ຕັ້ງຢູ່ໄກຈາກເສັ້ນທາງລົດ ຫຼື ໄກບ້ານຍາກໃນການເຂົ້າເຖິງນັ້ນຊາວກະສິກອນກໍ່ຍັງສືບຕໍ່ຖາງປ່າເຮັດໄຮ່ເລື່ອນລອຍຢູ່. ເນື່ອງຈາກວ່າບໍ່ມີ ພາກສ່ວນໃດລົງໄປກວດກາຕິດຕາມຄືນເຖິງຜົນ ການຈັດຕັ້ງປະຕິບັດເຮັດໃຫ້ປະຊາຊົນພາຍໃນທ້ອງຖິ່ນລະເລີຍຕໍ່ລະບຽບການນຳໃຊ້ທີ່ດິນ ແລະ ປ່າໄມ້ທີ່ທາງບ້ານໄດ້ກຳນົດຂຶ້ນ.

ເພື່ອເປັນການຕອບສະໜອງ ນະໂຍບາຍລັດຖະບານທີ່ຕ້ອງການເພີ່ມເນື້ອທີ່ປົກຄຸມປ່າໄມ້ທົ່ວປະເທດໃຫ້ໄດ້ 70% ໃນປີ 2020 ຈາກໃນປະຈຸບັນມີປ່າໄມ້ປົກຄຸມກວມ 52%. ດັ່ງນັ້ນ, ວຽກງານມອບດິນມອບປ່າຈຶ່ງໄດ້ເລັ່ງໃສ່ກິດຈະກຳການຈັດສັນ ແລະ ແບ່ງເຂດດິນທຳການຜະລິດກະສິກຳພາຍໃນບ້ານເພື່ອກຳນົດເຂດການຜະລິດທີ່ແນ່ນອນ ແລະ ເພື່ອເປັນການເພີ່ມເນື້ອທີ່ປົກຄຸມປ່າໄມ້. ເຖິງຢ່າງໃດກໍ່ຕາມ, ກິດຈະກຳການຈັດຕັ້ງປະຕິບັດວຽກງານດັ່ງກ່າວນັ້ນ ກໍ່ເປັນອີກປັດໃຈໜຶ່ງທີ່ສົ່ງຜົນເຮັດໃຫ້ຊາວກະສິກອນ ພາຍໃນບ້ານພົບບັນຫາຫຍຸ້ງຍາກໃນການເຂົ້າເຖິງພື້ນທີ່ທຳການຜະລິດເປັນຕົ້ນ ແມ່ນການກຳນົດພື້ນທີ່ປ່າສະຫງວນທີ່ກວມເອົາເນື້ອທີ່ທຳການຜະລິດຂອງປະຊາຊົນທີ່ເຄີຍທຳການຜະລິດໃນເມື່ອກ່ອນ.

ອີງຕາມການວາງແຜນ ນຳໃຊ້ທີ່ດິນໃນເມື່ອກ່ອນແມ່ນຂາດການສຶກສາ ແລະ ປະເມີນເຖິງອັດຕາການເພີ່ມຂຶ້ນຂອງຈຳນວນປະຊາກອນ: ຈາກການກຳເນີດແບບທຳມະຊາດ ແລະ ຈາກການຍົກຍ້າຍຖິ່ນຖານຊຶ່ງເປັນບັນຫາທີ່ສຳຄັນ. ດັ່ງນັ້ນ, ພາຍຫຼັງສຳເລັດກິດຈະກຳວຽກງານມອບດິນມອບປ່າແລ້ວກໍ່ເຮັດໃຫ້ເກີດມີບັນຫາ ການຂັດແຍ່ງທີ່ດິນຊຶ່ງເຮັດໃຫ້ຈຳກັດພື້ນທີ່ທຳການຜະລິດ.

ຮູບທີ 1 ການສະໜອງພື້ນທີ່ການຜະລິດຫຼັງມອບດິນມອບປ່າ



## 4.3 ການປະເມີນການມີສ່ວນຮ່ວມຂອງປະຊາຊົນແຕ່ລະບາດກ້າວ

ສ່ວນໃຫຍ່ແລ້ວກິດຈະກຳ ທີ່ປະຊາຊົນພາຍໃນທ້ອງຖິ່ນເຂົ້າຮ່ວມ ແມ່ນຈະເຂົ້າຮ່ວມກອງປະຊຸມເຜີຍແຜ່ວຽກງານ (ມື້ທຳອິດ), ການສ້າງແຜນທີ່ບ້ານ, ການເຂົ້າຮ່ວມກຸ່ມສົນທະນາຕ່າງໆ (ກຸ່ມຍິງ, ກຸ່ມຊາຍ ແລະ ກຸ່ມເຖົ້າແກ່ແນວໂຮມ), ການນຳພາທີມງານລົງສຳຫຼວດພື້ນທີ່ຂອບເຂດຊາຍແດນບ້ານ, ການວາງແຜນການນຳໃຊ້ທີ່ດິນ ແລະ ກອງປະຊຸມສະຫຼຸບຜົນ (ມື້ສຸດທ້າຍ). ຊຶ່ງໃນກອງປະຊຸມດັ່ງກ່າວນີ້, ເປັນການເປີດໂອກາດໃຫ້ແຕ່ລະຜູ້ເຂົ້າຮ່ວມໄດ້ມີໂອກາດສະແດງຄຳຄິດຄຳເຫັນເພື່ອຫາວິທີທາງແກ້ໄຂຮ່ວມກັນ ແລະ ປຶກສາຫາລືເຖິງແຕ່ລະປະເດັນບັນຫາທີ່ເກີດຂຶ້ນພາຍໃນບ້ານ. ເຖິງຢ່າງໃດກໍ່ຕາມ, ອຳນາດການປົກຄອງພາຍໃນບ້ານ ແມ່ນມີຄວາມສຳຄັນໃນການຕັດສິນໃຈຄັດເລືອກ ຜູ້ເຂົ້າຮ່ວມກິດຈະກຳນຳທີມງານວາງແຜນນຳໃຊ້ທີ່ດິນ (ກຸ່ມສົນທະນາ, ລົງສຳຫຼວດພື້ນທີ່ ແລະ ອື່ນໆ). ເນື່ອງຈາກວ່າອຳນາດການປົກຄອງເປັນຜູ້ທີ່ສາມາດຕັດສິນບັນຫາ. ເພາະສະນັ້ນ, ຈຶ່ງເຮັດໃຫ້ປະຊາຊົນພາຍໃນບ້ານໂດຍສະເພາະແມ່ນເພດຍິງບໍ່ກ້າທີ່ຈະສະແດງຄຳຄິດຄຳເຫັນ ເນື່ອງຈາກວ່າມັນບໍ່ແມ່ນສິດ ແລະ ໜ້າທີ່ຂອງເຂົາເຈົ້າ ໃນເມື່ອທຸກສິ່ງທຸກຢ່າງຂຶ້ນກັບອຳນາດການປົກຄອງບ້ານ ເປັນຜູ້ຕັດສິນໃຈ ແລະ ອີກປັດໄຈໜຶ່ງກໍ່ແມ່ນຍ້ອນຄວາມບໍ່ເຂົ້າໃຈຕໍ່ກັບການສະເໜີ ຂອງທາງທີມງານ. ເຊັ່ນດຽວກັນກັບກິດຈະກຳການສ້າງແຜນທີ່ການວາງແຜນນຳໃຊ້ທີ່ດິນພາຍຫຼັງສຳເລັດການສຳຫຼວດພື້ນທີ່ຕົວຈິງນັ້ນມີພຽງແຕ່ພະນັກງານ ຫຼື ທີມງານຈັດຕັ້ງປະຕິບັດວຽກງານວາງແຜນນຳໃຊ້ທີ່ດິນທີ່ມາຈາກພາກຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ, ຈະມີກໍ່ພຽງແຕ່ອຳນາດການປົກຄອງບ້ານເຂົ້າຮ່ວມນຳຈຳນວນໜຶ່ງເທົ່ານັ້ນ. ຊຶ່ງກິດຈະກຳດັ່ງກ່າວແມ່ນມີຄວາມສຳຄັນຫຼາຍທີ່ຕ້ອງໄດ້ລວບລວມເອົາປະຊາຊົນທ້ອງຖິ່ນ ເຂົ້າຮ່ວມ ແລະ ວາງແຜນຮ່ວມກັນ ເພື່ອໃຫ້ໄດ້ມາເຊິ່ງຄວາມເປັນເອກກະພາບ. ປະຊາຊົນສ່ວນໃຫຍ່ ແມ່ນບໍ່ມີຄວາມຮູ້ກ່ຽວກັບແຜນທີ່ ທີ່ທາງທີມງານສ້າງຂຶ້ນ. ເພາະສະນັ້ນ, ເຂົາເຈົ້າກໍ່ບໍ່ຮູ້ວ່າຈະມີການສະແດງຄຳເຫັນຄືໃດ.

ຈາກກິດຈະກໍາການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າ ທີ່ໄດ້ຈັດຕັ້ງປະຕິບັດຜ່ານມາໃນຊຸມປີ 1990 ຈົນມາເຖິງການຈັດຕັ້ງປະຕິບັດວຽກງານວາງແຜນນໍາໃຊ້ທີ່ດິນແບບມີສ່ວນຮ່ວມໃນປີ 2009, ສາມາດປະເມີນລະດັບການມີສ່ວນຮ່ວມ ຂອງປະຊາຊົນທ້ອງຖິ່ນໄດ້ຄື: ມີທ່າອ່ຽງເພີ່ມຂຶ້ນເນື່ອງຈາກວ່າ ເປັນຮູບແບບໃໝ່ໃນຂັ້ນຕອນການວາງແຜນ. ເຖິງຢ່າງໃດກໍ່ຕາມ, ເຖິງແມ່ນວ່າຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວຂອງປະຊາຊົນພາຍໃນທ້ອງຖິ່ນຕໍ່ກັບ ຈຸດປະສົງ ຂອງວຽກງານການວາງແຜນນໍາໃຊ້ທີ່ດິນຈະໄດ້ຮັບການປັບປຸງກໍ່ຕາມແຕ່ຄວາມຫຼາກຫຼາຍ ທາງດ້ານບາດກ້າວໃນການຈັດຕັ້ງປະຕິບັດຍັງບໍ່ມີຫຼາຍ, ໂດຍສະເພາະແມ່ນບາດ ກ້າວກໍານົດເຂດ ແລະ ການວາງແຜນການນໍາໃຊ້ທີ່ດິນພາຍໃນບ້ານ. ນອກຈາກນີ້, ການອອກສຽງ ແລະ ການປະກອບຄໍາຄິດຄໍາເຫັນຂອງປະຊາຊົນສ່ວນໃຫຍ່ແມ່ນຍັງມີໜ້ອຍ. ຊຶ່ງການອອກສຽງດັ່ງກ່າວນັ້ນຈະເປັນຜົນດີໃຫ້ແກ່ການເຈລະຈາຕໍ່ລອງ ກັນກັບພາກສ່ວນທີ່ກ່ຽວຂ້ອງ (ຫ້ອງການສົ່ງເສີມກະສິກໍາ ແລະ ປ່າໄມ້ເມືອງ ແລະ ກັບອໍານາດການປົກຄອງບ້ານອ້ອມຂ້າງໃນການກິດຈະກໍາການກໍານົດຂອບເຂດຊາຍແດນບ້ານ).

ການມີສ່ວນຮ່ວມ ຂອງປະຊາຊົນພາຍໃນທ້ອງຖິ່ນຕໍ່ກັບວຽກງານການວາງແຜນນໍາໃຊ້ທີ່ດິນແມ່ນມີຄວາມສໍາຄັນຫຼາຍ ແລະ ທັງເປັນຕົວຊີ້ວັດໜຶ່ງທີ່ເຮັດໃຫ້ຜົນຂອງການຈັດຕັ້ງປະຕິບັດວຽກງານດັ່ງກ່າວນັ້ນ ປະສົບຜົນສໍາເລັດອັນເປັນທີ່ໜ້າພໍໃຈຂອງສອງຝ່າຍລະຫວ່າງທີມງານຈັດຕັ້ງປະຕິບັດກັບປະຊາຊົນພາຍໃນທ້ອງຖິ່ນ. ຈາກການລົງເກັບກໍາຂໍ້ມູນຕົວຈິງ ເຫັນໄດ້ວ່າບ້ານທີ່ປະຊາຊົນມີສ່ວນຮ່ວມໃນຫຼາຍກິດຈະກໍາ ການຈັດຕັ້ງປະຕິບັດ, ຈະມີປະສິດທິຜົນຫຼາຍກວ່າເນື່ອງຈາກປະຊາຊົນມີຄວາມເຂົ້າໃຈ, ພຶງພໍໃຈຕໍ່ລະບຽບການຈັດການຄຸ້ມຄອງ ຊັບພະຍາກອນທໍາມະຊາດພາຍໃນບ້ານທີ່ພວກເຂົາໄດ້ມີສ່ວນຮ່ວມສ້າງຂຶ້ນ. ແຕ່ກົງກັນຂ້າມກັບບ້ານ ທີ່ຂາດການມີສ່ວນຮ່ວມຂອງປະຊາຊົນໃນການສະແດງຄໍາຄິດຄໍາເຫັນພາຍໃນກອງປະຊຸມປຶກສາຫາລືກັນ ແລະ ຈັດຕັ້ງເປັນກຸ່ມສົນທະນາກໍ່ຈະເຮັດໃຫ້ຜົນລັບອອກມາບໍ່ເປັນທີ່ໜ້າພຶງພໍໃຈ.

ຮູບທີ 2 ການມີສ່ວນຮ່ວມຂອງປະຊາຊົນໃນທ້ອງຖິ່ນ ໃນກິດຈະກໍາການໄດ້ກໍານົດເຂດທໍາການຜະລິດ



## 5. ສະຫຼຸບ

ນະໂຍບາຍມອບດິນມອບປ່າ ທີ່ໄດ້ຈັດຕັ້ງປະຕິບັດຜ່ານມານັ້ນ ແມ່ນຍັງເຮັດບໍ່ໄດ້ດີເທົ່າທີ່ຄວນເນື່ອງຈາກວ່າ ຂາດລະບົບການຕິດຕາມປະເມີນຜົນພາຍຫຼັງສຳເລັດກິດຈະກຳ, ເຮັດໃຫ້ຊາວກະສິກອນພາຍໃນທ້ອງຖິ່ນປ່ອຍປະລະເລີຍຕໍ່ລະບຽບການຄຸ້ມຄອງພື້ນທີ່ທຳການຜະລິດຊຶ່ງເປັນສາເຫດເຮັດໃຫ້ຊາວກະສິກອນສາມາດສືບຕໍ່ທຳການຖາງປ່າເຮັດໄຮ່ຊະຊາຍ. ພ້ອມດຽວກັນນັ້ນ, ປັດໄຈທີ່ສົ່ງຜົນເຮັດໃຫ້ຜົນການຈັດຕັ້ງປະຕິບັດວຽກງານການວາງແຜນນຳໃຊ້ທີ່ດິນໃຫ້ໄດ້ຮັບຜົນທາງດ້ານບວກ ແລະ ທາງດ້ານລົບແມ່ນຂຶ້ນກັບຫຼາຍປັດໄຈດ້ວຍກັນ. ແຕ່ໜຶ່ງໃນນັ້ນ, ປັດໄຈການມີສ່ວນຮ່ວມຂອງປະຊາຊົນ ແມ່ນປັດໄຈໜຶ່ງທີ່ສຳຄັນ, ຫາກຂາດການມີສ່ວນຮ່ວມຂອງປະຊາຊົນພາຍໃນທ້ອງຖິ່ນແລ້ວຈະເຮັດໃຫ້ເຂົາເຈົ້າບໍ່ມີຄວາມຮູ້ ແລະ ບໍ່ມີສາມາດກຳເນື້ອໃນໄດ້. ເຮັດໃຫ້ພາຍຫຼັງທີ່ສຳເລັດກິດຈະກຳມອບດິນມອບປ່າແລ້ວ ປະຊາຊົນພາຍໃນທ້ອງຖິ່ນຍັງສືບຕໍ່ຈັດຕັ້ງປະຕິບັດກິດຈະກຳຄືດັ່ງທີ່ໄດ້ຈັດຕັ້ງຜ່ານມາໃນອາດີດ. ເຖິງຢ່າງໃດກໍ່ຕາມ, ລະດັບການມີສ່ວນຮ່ວມຂອງປະຊາຊົນພາຍໃນທ້ອງຖິ່ນສົມທຽບລະຫວ່າງການຈັດຕັ້ງປະຕິບັດວຽກງານມອບດິນມອບປ່າ ໃນເມື່ອກ່ອນກັບການຈັດຕັ້ງປະຕິບັດວຽກງານວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ແມ່ນບໍ່ມີຫຍັງແຕກຕ່າງກັນຫຼາຍເນື່ອງຈາກວ່າການລະດັບການມີສ່ວນຮ່ວມໃນທ້ອງຖິ່ນ ແມ່ນຍັງບໍ່ສາມາດເພີ່ມຂຶ້ນໄດ້. ການອອກສຽງຫຼືການສະແດງຄຳຄິດຄຳເຫັນຂອງປະຊາຊົນຍັງຕ່ຳ. ເວົ້າລວມແລ້ວ, ວຽກງານມອບດິນມອບປ່າ ແລະ ວຽກງານການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ແມ່ນຍັງບໍ່ສາມາດຈັດຕັ້ງປະຕິບັດໃຫ້ໄດ້ສົມບູນແບບເທື່ອ. ດັ່ງນັ້ນ, ຫາກຢາກເຮັດໃຫ້ການຈັດຕັ້ງປະຕິບັດວຽກງານວາງແຜນນຳໃຊ້ທີ່ດິນໃຫ້ເກີດປະສິດຕິພາບຫຼາຍດ້ານ, ຄວນຈະມີການຮວບຮວມເອົາທ້ອງຖິ່ນໃຫ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດໂດຍລຸລ່ວງກິດຈະກຳ ແລະ ຈຸດປະສົງເປົ້າໝາຍຂອງການຈັດຕັ້ງປະຕິບັດໃຫ້ເປັນຢ່າງດີ. ພ້ອມດຽວກັນນັ້ນ, ຄວນມີການຈັດຕັ້ງເປັນທີມງານເປັນຢ່າງດີກ່ອນທີ່ຈະລົງໄປຈັດຕັ້ງປະຕິບັດຕົວຈິງໃນທ້ອງຖິ່ນ.

## ເອກະສານອ້າງອີງ

**Florian, R. 2004.** Comparative study on practices and lessons in land use planning and land allocation, Consultancy report, MRC-GTZ.

**Iris, E. 2001.** Analysis of land allocation and implications on land management in Laos, Dresden University of Technology Tharandt, Germany, 25-26 p.

**Evrard, O. 2004.** The implementation of land allocation and land titling in Laos: impacts on land access and rural livelihoods, FAO's land tenure service and sub-programme 3.1 (access to natural resources) of livelihood support program.

**Solivanh, B. 2004.** Study on land allocation to individual households in rural areas of Laos, GTZ, Vientiane Lao PDR.

**Sawathvong, S. 2004.** Experience from developing an integrated land use planning approach for protected areas in Lao PDR, Forest policy and economic 6, 553-566 p.